ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 0335 ............ /ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 30 JAN 2023 ...............

# ໃບລາຍງານ

ຮຽນ: ທ່ານຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,
ທ່ານຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື,

ເລື່ອງ: ແຈ້ງມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2023.

- ອີງຕາມ ຂໍ້ຕົກລົງ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 27/ຄຄຊ ລົງວັນທີ 29 ມີນາ 2022.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິຂອງກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2023 ວັນທີ 30 ມັງກອນ 2023 ດັ່ງລາຍລະອຽດລຸ່ມນີ້:

**ວາລະທີ 1.** ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2022, ປະຊຸມເມື່ອວັນທີ 29 ກໍລະກົດ 2022. ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງເຫັນດີ ຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.523.355.938 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

**ວາລະທີ 2:** ອະນຸມັດການຊອກຫາແຫຼ່ງທຶນ ໂດຍຜ່ານການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ ໃນວົງເງິນບໍ່ເກີນ 500 ລ້ານໂດລາສະຫະລັດ ຫຼື ທຽບເທົ່າສະກຸນເງິນອື່ນໆ ເພື່ອໃຊ້ສຳລັບ ການຊຳລະຄືນໜີ້ສິນເດີມທີ່ຈະຄົບກຳນົດຂອງບໍລິສັດ (Refinance) ໃນລະຫວ່າງປີ 2023-2024 ລວມເຖິງການຊຳລະຄືນ ເງິນກູ້ ແລະ/ຫຼື ຮຸ້ນກູ້ທີ່ອອກຈຳໜ່າຍຜ່ານມາ, ຄ່າໃຊ້ຈ່າຍທົ່ວໄປໃນການເຄື່ອນໄຫວດຳເນີນທຸລະກິດຂອງບໍລິສັດ ລວມເຖິງເງິນທຶນໝູນວຽນຂອງບໍລິສັດ ພ້ອມດ້ວຍລາຍລະອຽດອື່ນໆທີ່ກ່ຽວຂ້ອງ ເຊັ່ນ ສະກຸນເງິນ, ອັດຕາດອກເບ້ຍ, ໄລຍະກູ້ຢືມຫຼືອາຍຸຮຸ້ນກູ້, ແລະ ວິທີການສະເໜີຂາຍ ຕາມທີ່ສະເໜີຕໍ່ກອງປະຊຸມ. ພ້ອມກັນນີ້, ກອງປະຊຸມ ມອບອຳນາດໃຫ້ສະພາບໍລິຫານຂອງບໍລິສັດ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກສະພາບໍລິຫານຂອງບໍລິສັດ ເປັນຜູ້ມີອຳນາດໃນການພິຈາລະນາແລະດຳເນີນວຽກງານ ກ່ຽວກັບການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ ດັ່ງລາຍລະອຽດລຸ່ມນີ້:

**(1)** ພິຈາລະນາ ແລະ ກຳນົດວົງເງິນ ທີ່ຈະອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມຈາກສະຖາບັນການເງິນ, ລາຍລະອຽດທີ່ກ່ຽວຂ້ອງ ເຊັ່ນ ປະເພດຂອງຮຸ້ນກູ້, ເງິນກູ້ຢືມ, ຂໍ້ກຳນົດແລະເງື່ອນໄຂ, ໄລຍະເວລາ



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ 2392,
ໂທລະສັບ: (856-21) 316142 ແຟັກ: (856-21) 316141. ອີເມວ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ການກູ້ຢືມຫລືອາຍຸຂອງຮຸ້ນກູ້, ມູນຄ່າການກູ້ຢືມ ແລະ/ຫຼື ມູນຄ່າອອກຈໍາໜ່າຍຮຸ້ນກູ້, ອັດຕາດອກເບ້ຍ, ສະກຸນເງິນ, ໄລຍະເວລາໃນການອອກ ແລະ ສະເໜີຂາຍ, ວິທີການຈັດສັນ, ວິທີການສະເໜີຂາຍ, ລາຍລະອຽດການສະເໜີຂາຍ;

**(2)** ການເປີດເຜີຍຂໍ້ມູນ, ຕິດຕໍ່, ການໃຫ້ຂໍ້ຄວາມ, ການໃຫ້ຂໍ້ມູນ, ດັດແກ້, ເພີ່ມເຕີມ, ເຈລະຈາ, ຕົກລົງ, ລົງນາມ, ການສົ່ງມອບ ຄໍາຮ້ອງຕ່າງໆ, ສັນຍາ ແລະ/ຫຼື ເອກະສານຕ່າງໆ ທີ່ຈໍາເປັນ ແລະ ກ່ຽວຂ້ອງກັບການອອກຈໍາໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມຈາກສະຖາບັນການເງິນ ໃຫ້ແກ່ບັນດາໜ່ວຍງານຕ່າງໆ ລວມມີແຕ່ບໍ່ຈໍາກັດພຽງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ທະນາຄານແຫ່ງ ສປປ ລາວ, ຄະນະກໍາມະການກໍາກັບຫຼັກຊັບແລະຕະຫຼາດຫຼັກຊັບ ປະເທດໄທ, ທະນາຄານແຫ່ງປະເທດໄທ, ສະມາຄົມຕະຫຼາດກາສານໜີ້ແຫ່ງປະເທດໄທ, ໜ່ວຍງານລັດຖະບານ ແລະ/ຫຼື ອົງການຂອງລັດ ຫຼື ນິຕິບຸກຄົນຫຼືບຸກຄົນໃດ ທີ່ກ່ຽວຂ້ອງ;

**(3)** ຄັດເລືອກ, ແຕ່ງຕັ້ງ, ຖອດຖອນ ບໍລິສັດທີ່ປຶກສາ, ຜູ້ຈັດຈໍາໜ່າຍຫຼັກຊັບ, ຜູ້ຄໍ້າປະກັນ ການອອກຈໍາໜ່າຍຫຼັກຊັບ, ຕົວແທນ, ທີ່ປຶກສາ, ຕົວແທນຜູ້ຖືຮຸ້ນກູ້, ຕົວແທນຜູ້ອອກຮຸ້ນກູ້, ນາຍທະບຽນ ແລະ ຕົວແທນຊໍາລະ ແລະ/ຫຼື ບຸກຄົນອື່ນໆ ທີ່ຈໍາເປັນໃຫ້ແກ່ການດໍາເນີນທຸລະກໍາຈົນສໍາເລັດ;

**(4)** ເປີດບັນຊີທະນາຄານ ທີ່ກ່ຽວຂ້ອງກັບທຸລະກໍາການອອກຈໍາໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນ ກັບສະຖາບັນການເງິນ ໃນ ສປປ ລາວ, ປະເທດໄທ ຫຼື ປະເທດອື່ນໆ ສອດຄ່ອງຕາມກົດໝາຍແລະລະບຽບການທີ່ກ່ຽວຂ້ອງ;

**(5)** ປະຕິບັດແລະດໍາເນີນວຽກງານອື່ນໆທີ່ຈໍາເປັນແລະກ່ຽວຂ້ອງໄດ້ທຸກປະການ ເພື່ອໃຫ້ສໍາເລັດທຸລະກໍາດັ່ງກ່າວ, ລວມທັງໃຫ້ມີອໍານາດໃນການແຕ່ງຕັ້ງ ແລະ/ຫຼື ຖອດຖອນ ຜູ້ຮັບມອບອໍານາດ ໃນການດໍາເນີນການໃດໜຶ່ງດັ່ງກ່າວຂ້າງເທິງນີ້.

ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງເຫັນດີ ຫລາຍກວ່າສອງສ່ວນສາມ (2/3) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ຖືຮຸ້ນລວມກັນຫລາຍກວ່າ 80 ສ່ວນຮ້ອຍ ຂອງຈໍານວນຮຸ້ນທີ່ຖອກແລ້ວທັງໝົດ, ດັ່ງນີ້:

**(ກ) ຈໍານວນຄົນຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ:**

1. **ເຫັນດີ 132 ຄົນ ເທົ່າກັບ 100 ສ່ວນຮ້ອຍ ທຽບໃສ່ຈໍານວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.**

**(ຂ) ຈໍານວນຮຸ້ນ (ສຽງ) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ:**

1. **ເຫັນດີ 1.523.355.938 ຮຸ້ນ (ສຽງ), ເທົ່າກັບ 90,713546 ສ່ວນຮ້ອຍ ທຽບໃສ່ຈໍານວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.**

ດັ່ງນັ້ນ, ຈຶ່ງໄດ້ຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ,

ຮອງປະທານສະພາບໍລິຫານ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

**ຈັນທະບູນ ສຸກອາລຸນ**



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ 2392,
ໂທລະສັບ: **(856-21) 316142** ແຟັກ: **(856-21) 316141.** ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la